# ຄຳໄວ້ອາໄລ ແດ່ດວງວິນຍານຂອງທ່ານ

# ສີຈັນ ສູພົນ ບັ໋ງຊາເດີລາບ໊ົດ

---÷÷÷---

ກ່າວໂດຍ ພນະທ່ານຣັຖມົນຕຼີ ກະຊວງສຶກສາທິການ, ສິລະປະກອນ,

ກິລາ ແລະ ຍຸວະຊົນ.

---÷÷÷---

ສເດັຈ

ພນະທ່ານ

ທ່ານຍິງ ແລະ ທ່ານຊາຍ ທີ່ນັບຖືທັງຫລາຍ.

ວັນນີ້ ເປັນວັນທີ່ກະຊວງສຶກສາ ສິລະປະກອນ ກິລາ ແລະ ຍຸວະຊົນ ພ້ອມທັງຍາຕພີ່ນ້ອງ ໃນນະຄອນວຽງຈັນທນ໌ ແລະໃນທົ່ວທຸກແຂວງ ຮູ້ສຶກເສົ້າສລົດໃຈເປັນຢ່າງຍິ່ງ ເພາະໄດ້ສູນເສັຽມິດທີ່ດີ ຄຣູບາອາຈາຣຍ໌ ທີ່ເຕັມໄປດ້ວຍຄຸນວຸດທິ ແລະຄວາມຫວັງດີ ວີຣະບູຣຸດຜູ້ນຶ່ງ ທີ່ໄດ້ສລະຊີວິດທັງຊາດ ເພື່ອການສຶກສາທຸກປະເພດ ຈົນໄດ້ຊື່ວ່າເປັນ " ພໍ່ " ຜູ້ນຶ່ງ ເປັນ ປາປາ ຂອງການສຶກສາ ໃນພະຣາຊອານາຈັກລາວ.

ທ່ານສູພົນ ບັ໋ງຊາ ເດີລາບ໊ົດ. ເກີດເມື່ອວັນທີ ໑໐ ເດືອນໂນວອມ ໑໙໐໔ ທີ່ບ້ານມ່ວງເມືອງປາກເຊ ເປັນບຸຕຊາຍ ຂອງທ່ານ ບັ໋ງຊາ ເດີລາບ໊ົດ ຊຶ່ງເຄີຍເປັນ ເອກະ ອັກຄະ ມະຫາທິບໍດີ ປະຈຳອິນດູຈີນຝຣັ່ງເສສ.ແລະນາງ ສີຈັນ ເກີດທີ່ເມືອງ ຫີນບູນ ( ແຂວງຄຳມ່ວນ ).

ທ່ານໄດ້ຮ່ວມສົມຣົດ ກັບນາງບົດ ທິດາຂອງເຈົ້າເມືອງ ຄຳຜາ ສູວັນນະວົງສ໌ ແລະໄດ້ບຸດດ້ວຍກັນ ໕ ຄົນ ແຕ່ຍັງມີຊີວິດຢູ່ ໔ ຄົນ.

ຫລັງຈາກໄດ້ຮັບການສຶກສາ ຂັ້ນປະຖົມ ແລະ ມັທຍົມ ຢູ່ເມືອງ ພະນົມເປັນ ປະເທດຂເມນແລ້ວ ທ່ານໄດ້ກັບມາຮັບໃຊ້ ຢູ່ໃນວົງການສຶກສາຂອງພະຣາຊອານາຈັກລາວ ໂດຍເປັນຄຣູສອນ ຢູ່ໂຮງຮຽນຫາດຂາວ ແລະຕໍ່ມາ ໄດ້ເປັນຫົວໜ້າຫມວດ ຜູ້ທຳອິດ ຂອງໂຮງຮຽນແຫ່ງນັ້ນອີກດ້ວຍ.

ເມື່ອເຫັນວ່າ ການເອົາໃຈໃສ່ຕໍ່ການສອນ ແລະການປົກຄອງໂຮງຮຽນຂອງທ່ານ ເປັນທີ່ພໍໃຈແກ່ຣາຊການສຶກສາ ຣັຖບາລຝຣັ່ງເສສ ຈຶ່ງໄດ້ສົ່ງທ່ານ ໄປເຂົ້າໂຮງຮຽນໂອັບຣົມ ວິຊາຄຣູ ຂັ້ນສູງຢູ່ມະຫາວິທຍາໄລ ຮາໂນຍ ປະເທສວຽດນາມ, ຫລັງຈາກໄດ້ຮັບປະກາສນີຍະບັດ ວິຊາຄຣູ ຈາກໂຮງຮຽນແຫ່ງນີ້ແລ້ວ, ທ່ານສີຈັນ ສູພົນ ບັ໋ງຊາ ເດີລາບ໊ົດ ໄດ້ຖືກແຕ່ງຕັ້ງໃຫ້ເປັນອາຈານສອນ ແຕ່ປີ

໑໙໒໗ ເຖິງປີ ໑໙໓໙ ຢູ່ໂຮງຮຽນ ມັທຍົມ ປາວີ ຊຶ່ງເປັນໂຮງຮຽນມັທຍົມຫລັງທຳອິດຂອງລາວ ທີ່ວຽງຈັນທນ໌ ແຕ່ປີ ໑໙໓໙ ຫາປີ ໑໙໔໓ ທ່ານໄດ້ຖືກແຕ່ງຕັ້ງ ໃຫ້ໄປຮັບໜ້າທີ່ ເປັນຜູ້ກວດຣາຊການປະຖົມສຶກສາ ພາກໄຕ້ຂອງລາວ ໂດຍມີທີ່ວ່າການຢູ່ເມືອງປາກເຊ ນັບວ່າ ທ່ານໄດ້ເປັນຜູ້ທຳອິດທີ່ໄດ້ຮັບກຽດນີ້ ເພາະໃນສະໄມນັ້ນ ການກວດຣາຊການຝ່າຍສຶກສາຂອງປະເທສເຮົາ ໄດ້ແບ່ງເປັນສອງພາກ ຄື: ພາກເໜືອ ຊຶ່ງມີທີ່ວ່າການຢູ່ ຫລວງພະບາງ ແລະ ພາກໄຕ້ ຢູ່ປາກເຊ ເທົ່ານັ້ນ.

ການທີ່ທ່ານໄດ້ຮັບແຕ່ງຕັ້ງໃຫ້ເປັນຜູ້ມີໜ້າທີ່ ເປັນຜູ້ກວດຣາຊການປະຖົມສຶກສາ ດັ່ງທີ່ກ່າວມາແລ້ວນີ້ເອງ ທ່ານໄດ້ສແດງຄວາມຄິດເຫັນ ອັນເປັນປະໂຍດ ແລະຄຸນຄ່າ ອັນສູງ ແກ່ຣາຊການສຶກສາ ຜົນການຂອງທ່ານ ກໍໄດ້ເຫັນເປັນປະຈັກແກ່ທຸກຄົນ ຈົນຮອດທຸກວັນນີ້ ຄື: ທ່ານໄດ້ຖືເອົາໂອກາດອັນດີນີ້ ສເນີໃຫ້ມີໂຮງຮຽນວັດ ແລະໂຮງຮຽນຕາມໝູ່ບ້ານຂຶ້ນ ແລະກໍໄດ້ຮັບຄວາມເຫັນພ້ອມ ຈຶ່ງເປັນການຢືນຢັນໄດ້ລັກແນ່ວ່າ ໂຮງຮຽນວັດໄດ້ມີມາ ໂຮງຮຽນຕາມໝູ່ບ້ານ ໄດ້ມີການຂຍາຍຂຶ້ນ ແຕ່ຕົ້ນຈົນຮອດດຽວນີ້ນັ້ນ ແມ່ນຍ້ອນຄວາມຄິດ ແລະຂໍ້ສເນີຂອງທ່ານ.

ຫລັງຈາກສົງຄາມໂລກຄັ້ງທີ່ສອງ ເມື່ອພະຣາຊອານາຈັກລາວ ໄດ້ເອກຣາຊ ແລະເປັນສະມາຊິກຂອງສະຫະພັນຝຣັ່ງເສສນັ້ນ ທ່ານ ສຸພັນ ບົວຊາ ເດີລາບົດ ໄດ້ຖືກແຕ່ງຕັ້ງ ໃຫ້ເປັນຜູ້ແທນຣາຊອານາຈັກລາວ ໃນສະພາທີ່ປຶກສາສະຫະພັນຝຣັ່ງເສສ ທີ່ Versailles ທັງໄດ້ຮັບກຽດຖືກເລືອກຕັ້ງໃຫ້ເປັນຮອງປະທານຂອງສະພານີ້ ນັບແຕ່ປີ ໑໙໔໓ ຈົນເຖິງ ປີ ໑໙໔໙. ຕລອດເວລາທີ່ໄດ້ປະຕິບັດໜ້າທີ່ໃນປະເທສຝຣັ່ງເສສນັ້ນ ທ່ານ ສຸພັນ ໄດ້ມີໂອກາດກຳກັບໃຫ້ການຊ່ວຍເຫລືອ ແລະຄວາມແນະນຳຕັກເຕືອນ ແກ່ນັກສຶກສາລາວ ໃນຝຣັ່ງເສສເກືອບທຸກຄົນ ນອກຈາກນີ້ ຍັງໄດ້ເຂົ້າຮ່ວມໃນຄນະກັມມະການ ຣຽບລຽງ ຂໍ້ສັນຍາດ້ານສຶກສາ ແລະວັທນາທັມ ຣະຫວ່າງລາວ ແລະຝຣັ່ງເສສ ໃນປີ ໑໙໔໗ ອີກດ້ວຍ. ແຕ່ນັ້ນມາ ຫລັງຈາກທ່ານ ເຖິງປີການເບັ້ຽບຳນານຂອງຣັຖບານຝຣັ່ງເສສແລ້ວ ທ່ານກໍໄດ້ພຍາຍາມ ຂໍມາຮັບໃຊ້ກະຊວງສຶກສາ ຂອງຣັຖບາລອີກ ແລະໄດ້ຮັບຕຳແໜ່ງຕໍ່ເນື່ອງກັນມາ ເປັນທີ່ປຶກສາ ຂອງກະຊວງສິລປະກອນ, ເປັນອະທິບໍດີກົມຝຶກຫັດຄຣູ, ເປັນອະທິບໍດີປະຈຳກະຊວງສຶກສາ ແລະຕຳແໜ່ງສຸດທ້າຍນີ້ຄື : ເປັນທີ່ປຶກສາ ຂອງຣັຖມົນຕີກະຊວງສຶກສາທິການ ສິລປະກອນ ກິລາ ແລະ ຍຸວະຊົນ ຈົນເຖິງວັນ ອະສັນຍະກັມຂອງທ່ານ.

ນອກຈາກ ໜ້າທີ່ຮັບຜິດຊອບ ໃນຕຳແໜ່ງອັນສູງຂອງກະຊວງສຶກສາແລ້ວ ທ່ານ ສຸພັນ ບົວຊາ ເດີລາບົດ ຍັງເປັນຜູ້ມີນິສັຍ ໃຈຄໍໄຝ່ຝັນໃນການຟື້ນຟູສິລປະກັມຂອລາວ ມາແຕ່ສໄມຍັງໜຸ່ມອີກ ຄື: ໄດ້ແຕ່ງບົດລະຄອນເອງຫລາຍບົດ ພ້ອມທັງໄດ້ສແດງເປັນຕົວລະຄອນ ຜູ້ທີ່ມີຊື່ສຽງຜູ້ນຶ່ງ

ໃນສ່ວນກັບວົງຊາວຫນຸ່ມສໄນນັ້ນ ຈຶ່ງໄດ້ນຳເອົາຄນະໄປສແດງປະເທສຕ່າງໆ ຂອງອິນດູຈີນຝຼັ່ງເສສ ຢູ່ທີ່ເມືອງ ພນົມເປັນ ເມື່ອປີ ໑໙໒໗ ແລະຕໍ່ມາ ທ່ານຍັງໄດ້ນຳເອົາຄນະສິລປະລາວ ໄປສແດງຢູ່ Exposition Coloniale ເມືອງ Paris ເມື່ອປີ ໑໙໓໑ ອີກ.

ຊີວິດຂອງທ່ານ ສຸພົນ ບູ້ງຊາ ເດີລາບູ໊ດ ແຕ່ຫນຸ່ມຈົນແກ່ ເປັນຊີວິດອັນເສັຽສລະເພື່ອ ສິລປະວັທນາທັມ, ວັນນະຄະດີ ແລະ ການສຶກສາຂອງລາວ ໃຫ້ຈເຣີນກ້າວຫນ້າ. ຍ້ອນຄຸນສົມບັດ ດັ່ງກ່າວມານີ້ເອງ ທ່ານຈຶ່ງໄດ້ຮ່ວມຢູ່ໃນກັມມະການ ກອງວັນນະຄະດີລາວ ໄດ້ຮ່ວມຈັດຕັ້ງຫນັງສືພິມ ລາວໃຫຍ່ ຊຶ່ງເປັນຫນັງສືພິມຂອງລາວສບັບແຣກ ໄດ້ຂຽນປະວັດສາດລາວ ສຳຫລັບໂຮງຮຽນປະຖົມ ໄດ້ຮ່ວມໃນຄນະກັມມະການແຕ່ງແບບຮຽນຕ່າງໆ ຄຸນງາມຄວາມດີຂອງທ່ານ ສຸພົນ ໄດ້ຮັບຄວາມຍ້ອງ ຍໍສັນລະເສີນ ທັງໃນລາວ ແລະໃນປະເທສເພື່ອນມິດ ແລະ ເປັນຕົ້ນເຫດໃຫ້ທ່ານໄດ້ຮັບຫລຽນຕາຄຳ ຊອບຫລາຍຢ່າງ ແລະຈາກຫລາຍປະເທດ ເຊັ່ນ :

- Chevalier de l'ordre du Dragon d'Annam
- Officier de l'ordre Royale du Cambodge
- Médaille d'or du Mérite Cambodge
- Chevalier de l'Instruction Publique Laos
- Grand Officier de l'ordre du Million d'Eléphant et du Parasol blanc
- Palme Accadémique de France
- Officier d'Accadémic de France
- Officier de la Légion d'Honneur (France) Décret du 7 Août 1967.
- Chevalier de l'Instruction Publique 1966
- ເພື່ອຕອບສນອງ ຄຸນງາມຄວາມດີ ຂອງທ່ານ ສຸພົນ ພະບາທສົມເດັດພະເຈົ້າມະຫາຊີວິດ ໄດ້ຊົງພະມະຫາກະຣຸນາທິຄຸນ ໂພດເກົ້າ ໂພດຂນອມ ພະຣາຊທານ ຫລຽນຕາຄຳຊອບ Officier de l'Instruction Publique ຫລັງຈາກ ມະຣະນະພາບແລ້ວ.

ສເດັດຈ ພນະທ່ານ ທ່ານຜູ້ມີກຽດທັງຫລາຍ,

ຂ້າພະເຈົ້າບໍ່ສາມາດ ຈະບັນລະຍາຍໃຫ້ຫມົດສ້ຽງໄດ້ ໃນທີ່ນີ້ ຄຸນງາມຄວາມດີ ຂອງທ່ານ ສຸພົນ ບູ້ງຊາ ເດີລາບູ໊ດ ທີ່ມີຕໍ່ຣັຖບານລາວ ຕໍ່ລູກລາວ ຫລານລາວ ແລະຍາດພີ່ນ້ອງຫູກຄືນ ເຖິງທ່ານ ສຸພົນ ໄດ້ຈາກເຮົາໄປ ໂດຍບໍ່ມີວັນກັບຄືນມາກໍ່ຕາມ ແຕ່ທ່ານຍັງໄດ້ປະຊື່ສຽງ ແລະຄວາມດີຫລາຍຢ່າງ ໃຫ້ແກ່ບ້ານເມືອງເຮົາ ເຫມືອນກັບທ່ານບໍ່ໄດ້ຈາກເຮົາໄປເລີຍ ສົມກັບພູດທະພາສິດທີ່ກ່າວວ່າ:

" ຣູປັງ ມັດຈານັງ ຊີຣະຕິ

ນະມະໂຄຕັງ ນະຊີຣະຕິ "

( ອັນຣູບກາຍຂອງສັດທັງຫລາຍນັ້ນ ຍ່ອມເຊື່ອມຊະລາຍໄປ ສ່ວນຊື່ສຽງ ບໍ່ເຊື່ອມສູນເປັນ ).

ຍາແມ່ບົດ ແລະຍາດພີ່ນ້ອງຂອງທ່ານ ສຸພົນ ບົ້ງຊາ ເດີລາບົ໊ດ ທີ່ຮັກແພງແລະນັບຖື,

ພວກຂ້າພະເຈົ້າ ໃນນາມຂອງກະຊວງສຶກສາທິການ ແລະໃນນາມຂອງຜູ້ຮ່ວມງານທຸກໆຄົນ ຂໍສແດງຄວາມເສົ້າໂສກສລົດໃຈທີ່ສຸດ ມາຍັງຍາແມ່, ຄອບຄົວ ແລະຍາດພີ່ນ້ອງທຸກໆຄົນ ຂໍທ່ານພີ່ນ້ອງທຸກຄົນ ຈົ່ງເຊື່ອວ່າ ການສູນເສັຽທ່ານສຸພົນຄັ້ງນີ້ ບໍ່ເປັນການສູນເສັຽອັນໃຫຍ່ ແຕ່ສເພາະພວກທ່ານເທົ່ານັ້ນ ຍັງເປັນການສູນເສັຽນັກປຣາດ ອາຈານຜູ້ນຶ່ງ ຂອງລາວເຮົາທຸກປວງຄົນ, ເພາະທຸກຄົນ ກໍຄົງໄດ້ຮັບຄວາມຮູ້ຈາກເພິ່ນ ບໍ່ຫລາຍກໍນ້ອຍ, ທຸກຄົນຖືວ່າ ເພິ່ນເປັນບຸກຄົນຕົວຢ່າງ ຊຶ່ງມີນ້ຳໃຈອັນສູງສົ່ງຂອງຊາດຜູ້ນຶ່ງ ພວກຂ້າພະເຈົ້າ ຈຶ່ງຂໍຈົດຈຳ ຄຸນສົມບັດ ແລະຕົວຢ່າງອັນດີຂອງເພິ່ນ ຈົນຊົ່ວກາຣະນານ.

ທ່ານ ສຸພົນ ບົ້ງຊາ ເດີລາບົ໊ດ ເອີຍ,

ທ່ານໄດ້ຈາກພວກຂ້າພະເຈົ້າໄປແລ້ວ ແຕ່ຄຸນງາມຄວາມດີ ທີ່ທ່ານໄດ້ສ້າງໄວ້ໃນໂລກມະນຸດນີ້ ເປັນອັນວ່າ ບໍ່ມີເວລາຈະສູນຫາຍໄປໄດ້ເລີຍ, ຂໍໃຫ້ດວງວິນຍານຂອງທ່ານ ຈົ່ງໄດ້ຮັບກຸສົນ ຜົນບຸນທີ່ທ່ານໄດ້ທຳໄວ້ ແລະແມ່ນຈະຢູ່ໂລກໃດ, ພົບໃດ ກໍດີ ຂໍດວງວິນຍານຂອງທ່ານ ຈົ່ງໄດ້ຮັບແຕ່ຄວາມສງົບ ແລະຄວາມສຸກຕລອດໄປ ຕາບເທົ່າເຂົ້າສູ່ພະນິພພານພູ້ນເທີ້ນ ./.

ໃຜຜູ້ຕັ້ງຕໍ່ເກື້ອ

ຄວາມດີ ອັນທ່ານ ປູນປອງປັບ
ເຖິງ ຈິບສູນສລາຍມວຍ
ແຕ່ວ່າ ຄວາມດີ ກຽຕສັກສີບໍ່ປິ້ນ
ມັ່ນ ພວກເຮົາມາທໍ້າຫຼຸມ
ອຸທິດບຸນເຖິງວິນຍານ
ຄືວ່າ ປາປາບລັງຊາຜູ້
ຫຼືວ່າ ທ່ານສຸພັນກໍ່ເອີ້ນ
ເອົາເທາະ ໃຜກໍ່ຫນີບໍ່ພົ້ນ
ທ່ານໄປກ່ອນ ຂໍທ່ານໄປເຖິງສຸຂ
ພວກເຮົາ ຂໍຢ່າໂສກາເສົ້າ
ຣັກທ່ານ ບູຊາຄຸນທ່ານແທ້
ອັນຫນຶ່ງ ພວກເຮົາທຸກທ່ານຜູ້
ຕ່າງກໍໂທມະນັງທຸກ
ແຕ່ວ່າ ກາລະການເຖິງແລ້ວ
ອາຍຸໄຂ ທ່ານຫາກພຽງທໍ່ນັ້ນ
ຄວາມຕາຍ ໃຜກໍ່ເວັ້ນບໍ່ໄດ້
ຫ້າວທ່ານມາໃນງານ
ແຕ່ວ່າ ເວລານັ້ນ
ສັງຂານທັນ ບໍ່ມີແນວທ່ຽງຕັ້ງ
ຄາວນັ້ນ ຮາງກາຍທ່ານເຫືອດແຫ້ງ
ຄວາມດີ ຊຶ່ງທ່ານກອຍໃຈເຮັດ
ແມ່ນບໍ່ສູນສລາຍສ້ຽງ
ໂຮງຮຽນວັດ ແລະ ບ້ານມີຄູ່ມື້
ອັນນຶ່ງ ທ່ານເປັນຜູ້ມາດແມ້ຖະ
ຣັກ ເທີດທູນປະເພນີລາວ
ກອຍໃຈສະສົມສ້າງ
ໂທດທາງພານເຣີະນັ້ນ
ແນວທີ່ທ່ານເຮັດລ້ວນ
ເປັນຕົ້ນ ປັບປຸງ ການສຶກສາລາວ
ສະສົມຫາແນວຊວານ
ສເນີຂຍາຍໂຮງຮຽນວັດ ໂຮງຮຽນບ້ານໃຫ້ກວ້າງ
ທ່ານສຸພັນ ມີຈິດຣັກນ້ອງອາຍ
ມັກມ່ວນຊຸມແຊວຝູງ
ຣັກທໍ່ ສີລະປະຊັ້ນ
ຂັບງື່ມ ລິເກ ລຳເກົ່ານັ້ນ

ປຸນປະກອບຄວາມດີ - ເລື້ອຍ ໆ
ປຸງມາໃຫ້ດີແລ້ວ
ມໍຣະນາ ຊຸມຫນັງເປື່ອຍ
ສລາຍສ້ຽງເສື່ອມໄປ
ປະກອບສ່ວນອາໄລຣັກ
ທ່ານຜູ້ມໍຣະນາແລ້ວ
ເມທີ່ຊຸນໄດ້ຕາຍຈາກ ເຮົາແລ້ວ
ໄດ້ລາລ້ຳໂລກຄົນ ໄປແລ້ວ
ການເກີດແກ່ເຈັບຕາຍ
ປະເສີດສູງສວັນຟ້າ
ເກີນການບໍ່ເຂົ້າຮ່ອມ
ໃຫ້ຕຽມຕັ້ງເຮັດບຸນ
ຫມົດຫມູ່ມວນລາວ
ຫ່ວງເຖິງຕົວທ່ານ
ແມ່ນໄຜເດີຊິຈັ່ງຢູ່
ຫອມຊິຍັງຕໍ່ເປັນ ທ່ານເອີຍ
ແມ່ນເປັນສ່ວນໄຜລາວ
ລ້ວນແຕ່ຕາຍສເມີຫມ້າ
ຜິດກັນຍ້ອມບໍ່ທ່ຽງ
ລ້ວນເພເປ້ປ່ຽນແປງ
ເນົ່າເປື່ອຍໄຟເຜົ້າ
ຝາກຝັງເຮົາໄວ້
ຍັງຄົງຄອງຢູ່
ຍ້ອນຕົວທ່ານທ່ານສເນີ
ມັກມ່ວນມວນສນຸກ
ກວ່າສູ້ອັນຈຳໄວ
ຄວາມດີມີປະໂຍດ
ສຸພັນທ່ານບໍ່ກ່ຽວກວນ
ເປັນປະໂຍດຄູນຫລາຍ
ໃຫ້ເດັ່ນສູງສເມີຫມ້າ
ສນອງການສຶກສາຊາຕ
ຂວາງລ້ຳແຜຫລາຍ
ສເມີພາບກັນຫມົດ
ເຜົ່າລາວເລີງເລື່ອຍ
ຂອງລາວເອງທຸກປະເພດ
ປາປາທ່ານທ່ານມັກຫລາຍ

ທ່ານເປີດ ແນວເຣີະຮ້າຍ

ເຫລົ້າ ຢາ ຄົນຊາເມົາ
ປາປາ ບໍ່ໄດ້ອາໄລດ້ວຍ
ວັທະນະທັມ ສີລະທັມລາວຊອບນັ້ນ
[illegible] ດ໊ຽວມ ອັ້ນທາດທານແຕກມ້າງ
ແຕ່ກຽຕ ສັກສີຍັງ
ຜົນກັມໃດ ທ່ານໄດ້ທຳດີໄວ້
ທ່ານຈາກເຮົາ ຂໍທ່ານເຖີງຊັ້ນຟ້າ
ຕໍ່ໄປ ມີແຕ່ກຽຕຊື້ກອງ
ທ່ານມັກ ຂັບງື່ມ ສັບຊູ່ແຄນ
ພວກເຮົາ ເຫັນຜົນແລ້ວ
ທຸກຢ່າງ ລ້ວນຊອບທັມຄູ່ການ
ເອົາລະ ເມື່ອຊີວິຕທ່ານສິ້ນ
ເວລາເພີ່ນ ຫາກໄດ້ທວນມາເຖີງ
ແມ່ນທ່ານໄປດີແລ້ວ
ຕັ້ງໃຈ ເປັນກຳລັງສິ່ງທັ້ນ

ເປັນປ່າຍມືວຫມອງ ມາກແລ້ວ
ໂບກໂປພມັ້ນໄພ
ດອນຂ້ອງ ອັນບໍ່ຊອບ
ປາປາທ່ານບໍ່ປ່ຽວາງ
ຊີວິຕເສື່ອມເສັຽສູນ
ຢູ່ຄົງສຖຽນຫມັ້ນ
ໃຫ້ຕາມມາຊ້ວານຊ່ອຍ ທ່ານເນີ
ສວັນລ້ຳໂລກລີ - ຫັ້ນທ້ອນ
ໃຫ້ເຮົາຮ່ວມໂຮມຮັກ - ເອົາໄວ້
ຢູ່ຍິນຂອງເຄົ້າ
ການງານທ່ານປະກອບ
ສຶກສາຊັ້ນສາດສິລປ໌
ເສັຽຈາກເຮົາໄປ
ເຂດພໍພຽງນີ້
ຊາວເຮົາເອີຍ ຢ່າເມົາໂສກ
ໃຫ້ເຖີງຊັ້ນຝ່າຍສວັນ ພູນທອນ ./.